— ຫົວໜ້າກົມ ເພື່ອຊາບ
— PA ຕົວ ພ/ງ ເພື່ອ ຊາບ ປັບຫົວ ຖາ ແບບ ປ ຕ ອີກ ປັບ ເນື້ອ ບວດ.
7/4/2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
ooo***ooo

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 253/ຫກ
ນະຄອນຫຼວງວຽງຈັນ, ວັນທີ 06 ເມສາ 2015

ແຈ້ງການ

ເຖິງ: - ບັນດາກົມ ແລະ ທຽບເທົ່າກົມ ພາຍໃນ ທຫລ;
- ບັນດາທະນາຄານແຫ່ງ ສປປ ລາວ ພາກເໜືອ, ພາກກາງ ແລະ ພາກໃຕ້;
- ບັນດາທະນາຄານທຸລະກິດລັດ, ລັດຮຸ້ນສ່ວນ, ເອກະຊົນ ແລະ ສາຂາທະນາຄານຕ່າງປະເທດ.

ເລື່ອງ: ການຈັດຕັ້ງການສະເຫຼີມສະຫຼອງປີໃໝ່ລາວ ປະຈຳປີ ພ.ສ 2558.

- ອີງຕາມແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ: 566/ຫລບ.ກລຂ ຄົ້ງວັນທີ 02 ເມສາ 2015;

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບການຈັດຕັ້ງການສະເຫຼີມສະຫຼອງປີໃໝ່ລາວ ປະຈຳປີ ພ.ສ 2558 ໃຫ້ຈັດຕັ້ງປະຕິບັດ ດັ່ງນີ້:

1. ການສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພ.ສ 2558 ເປັນປີທີ່ມີຄວາມໝາຍສຳຄັນ ເຊິ່ງເປັນປີທີ່ທົ່ວພັກ ທົ່ວປວງຊົນ ກຳລັງຊຸ້ນຂ້ຽວຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄົ້ງທີ IX ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄົ້ງທີ VII ໃນສົກປີສຸດທ້າຍ ແລະ ການກະກຽມສະເຫຼີມສະຫຼອງ 2 ວັນປະຫັວດສາດ ທີ່ສຳຄັນຂອງຊາດ;

2. ໃຫ້ຖືເອົາການສະເຫຼີມສະຫຼອງວັນບຸນປີໃໝ່ລາວ ປະຈຳປີ ພສ 2558 ທີ່ຈະໝຸນວຽນມາເຖິງນີ້ ເປັນໂອກາດໜຶ່ງທີ່ສຳຄັນ ໃນການສືບຕໍ່ເສີມຂະຫຍາຍມູນເຊື້ອ ຮີດຄອງປະເພນີອັນດີງາມ ແລະ ຄວາມສາມັກຄີເປັນປຶກແຜນຂອງຊາດ ທີ່ມີມາແຕ່ດົນນານແລ້ວ, ເປັນບຸນປະຈຳຊາດ ທີ່ທົ່ວປວງຊົນລາວທັງຊາດ ຖືເອົາໂອກາດນີ້ອວຍໄຊໃຫ້ພອນເຊິ່ງກັນ ແລະ ກັນ, ຈັດຕັ້ງສະເຫຼີມສະຫຼອງດ້ວຍບັນຍາກາດເບີກບານມ່ວນຊື່ນ,ຖືກຕ້ອງຕາມຮີດຄອງປະເພນີ ແລະ ວັດທະນາທຳອັນດີງາມຂອງຊາດ ຕິດພັນກັບການສົ່ງເສີມການທອງທ່ຽວ ແລະ ບົນຈິດໃຈປະຢັດມັດທະຍັດ, ບໍ່ຈັດງານລ້ຽງແບບຟຸມເฟือย, ບໍ່ນຳໃຊ້ຫາງົບປະມານ ແລະ ພາຫະນະຂອງລັດ ໄປທ່ຽວຫຼີ້ນບຸນ;

3. ເນື່ອງຈາກປີໃໝ່ລາວປີນີ້ ແມ່ນວັນທີ 14,15 ແລະ 16 ເມສາ 2015 (ກົງກັບວັນອັງຄານ, ວັນພຸດ ແລະ ວັນພະຫັດ). ສະນັ້ນ, ຈົ່ງຕົກລົງເຫັນດີ ໃຫ້ພັກຕໍ່ຮອດວັນທີ 17 ເມສາ 2015 ແລະ ກຳນົດວັນທີ 11 ເມສາ 2015 (ກົງກັບວັນເສົາ) ເປັນວັນເຮັດວຽກທາງລັດຖະການ ແທນວັນທີ 17 ເມສາ 2015;

ນອກຈາກນັ້ນ, ໃຫ້ເອົາໃຈໃສ່ເປັນພິເສດຕໍ່ການຮັກສາຄວາມສະຫງົບ ປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສຳນັກງານ, ໃຫ້ມີການແບ່ງຄວາມຮັບຜິດຊອບ ໃນການເວນຍາມ ແລະ ປະຈຳການ ເພື່ອປ້ອງກັນສຳນັກງານອົງການ ຕະຫຼອດໄລຍະປີໃໝ່ລາວ ແລະ ໃຫ້ສາມາດປະສານງານໄດ້ຢ່າງເປັນປົກກະຕິທຸກເວລາ.

ດັ່ງນັ້ນ, ຈົ່ງຂໍແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການນີ້ດ້ວຍ.

ເຮັນແທນ ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ຄຳແກ້ວ ວິສິສົມບັດ